ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

019

ເລກທີ /ປທສ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2015

# ຂໍ້ຕົກລົງ
# ວ່າດ້ວຍການແຂ່ງຂັນດ້ານໂທລະຄົມມະນາຄົມ

- ອີງຕາມ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ, ສະບັບປັບປຸງເລກທີ 09/ສພຊ, ລົງວັນທີ 21/12/2011;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 303/ນຍ, ລົງວັນທີ 26/09/2011, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ແລະ ມາດຕະການກ່ຽວກັບການຈັດຕັ້ງ, ຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວທຸລະກິດດ້ານໂທລະຄົມມະນາຄົມທີ່ມີລັກສະນະ ບໍ່ເປັນທຳ ແລະ ຈຳກັດ ທຸກຮູບການ ເພື່ອສົ່ງເສີມການແຂ່ງຂັນທີ່ເປັນທຳ, ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ແນ່ໃສ່ຊຸກຍູ້ການຂະຫຍາຍຕົວເສດຖະກິດ-ສັງຄົມ ແລະ ດຳເນີນໄປຕາມແຜນຍຸດທະສາດ, ເສດຖະກິດ-ສັງຄົມແຫ່ງຊາດ ຢ່າງຄວາມຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2. ການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການແຂ່ງຂັນດ້ານໂທລະຄົມມະນາຄົມ ແມ່ນ ການແຂ່ງຂັນລະຫວ່າງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທາງດ້ານລາຄາ, ປະລິມານ, ຄຸນນະພາບ, ການບໍລິການ, ການຈູງໃຈ, ການໂຄສະນາ ແລະ ການສະໜອງຂໍ້ມູນ. ການໃຫ້ບໍລິການດ້ານໂທລະຄົມມະນາຄົມ ໃຫ້ແກ່ຜູ້ໃຊ້ບໍລິການ ຕ້ອງເປັນທຳ, ສອດຄ່ອງກັບລະບຽບກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງ ສປປ ລາວໃນແຕ່ລະໄລຍະ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າໂທລະຄົມມະນາຄົມ** ໝາຍເຖິງ ຊັບພະຍາກອນໂທລະຄົມມະນາຄົມ, ອຸປະກອນໂທລະຄົມມະນາຄົມ, ສິ່ງຂອງອື່ນທີ່ຜູ້ໃຫ້ບໍລິການໃຊ້ເປັນສິນຄ້າໃນການຂາຍໃຫ້ແກ່ຜູ້ໃຊ້ບໍລິການດ້ານໂທລະຄົມມະນາຄົມ;
2. **ຕະຫຼາດໂທລະຄົມມະນາຄົມ** ໝາຍເຖິງ ຂອບເຂດການເຄື່ອນໄຫວທຸລະກິດທີ່ຜູ້ຊື້, ຜູ້ຂາຍ ແລະ ຜູ້ໃຫ້ບໍລິການຕິດຕໍ່ພົວພັນ, ຕົກລົງ ຊື້-ຂາຍ ສິນຄ້າ ແລະ ການບໍລິການກັນ ໂດຍກົງ ຫຼື ທາງອ້ອມ;
3. **ສ່ວນແບ່ງຕະຫຼາດໂທລະຄົມມະນາຄົມ** ໝາຍເຖິງ ອັດຕາສ່ວນຂອງມູນຄ່າ ການຊື້-ຂາຍ ສິນຄ້າ ແລະ ການບໍລິການ ຂອງວິສະຫະກິດໃດໜຶ່ງ ໃນຕະຫຼາດໂທລະຄົມມະນາຄົມ;
4. **ຄວາມລັບທາງທຸລະກິດໂທລະຄົມມະນາຄົມ** ໝາຍເຖິງ ຂໍ້ມູນກ່ຽວກັບກຳມະວິທີ, ວິທີການຜະລິດ, ການດຳເນີນທຸລະກິດ ຫຼື ການບໍລິການໂທລະຄົມມະນາຄົມ ຊຶ່ງມີຄວາມສຳຄັນຕໍ່ການດຳເນີນທຸລະກິດ ແລະ ສ້າງຄວາມເສຍຫາຍ ຕໍ່ຄວາມໝັ້ນຄົງ, ຖານະການເງິນຂອງຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມໃດໜຶ່ງ ເມື່ອຖືກເປີດເຜີຍ;
5. **ການບໍລິການໂທລະຄົມມະນາຄົມ** ໝາຍເຖິງ ການນຳໃຊ້ພື້ນຖານໂຄງລ່າງ ແລະ ຊັບພະຍາກອນໂທລະຄົມມະນາຄົມ ເພື່ອການດຳເນີນທຸລະກິດບໍລິການດ້ານໂທລະຄົມມະນາຄົມໃຫ້ເກີດມີຜົນຕອບແທນທີ່ເປັນເງິນ ຫຼື ຜົນປະໂຫຍດໃດໜຶ່ງ;
6. **ຜູ້ໃຫ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ດຳເນີນກິດຈະການໂທລະຄົມມະນາຄົມ;
7. **ຜູ້ໃຊ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ຜູ້ນຳໃຊ້ການບໍລິການຈາກບັນດາຫົວໜ່ວຍທຸລະກິດໂທລະຄົມມະນາຄົມ.

**ມາດຕາ 4. ນະໂຍບາຍກ່ຽວກັບສົ່ງເສີມການແຂ່ງຂັນທີ່ເປັນທຳ**

ລັດ ສົ່ງເສີມບັນດາຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມເຄື່ອນໄຫວທຸລະກິດ ໃຫ້ມີການແຂ່ງຂັນຢ່າງເປັນທຳ ພາຍໃຕ້ເງື່ອນໄຂຄວາມສະເໝີພາບ, ຮັບປະກັນຄຸນນະພາບ, ຮັບປະກັນການຂະຫຍາຍເຄືອຂ່າຍທົ່ວປະເທດ ແລະ ທັງຮ່ວມມືກັນ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

**ມາດຕາ 5. ຫຼັກການກ່ຽວກັບການຄຸ້ມຄອງ ແລະ ການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການຄຸ້ມຄອງ ແລະ ການແຂ່ງຂັນທາງດ້ານໂທລະຄົມມະນາຄົມ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ;
2. ຮັບປະກັນຄວາມສະເໝີພາບ, ປະສິດທິພາບ, ປະສິດທິຜົນ, ການຮ່ວມມື ແລະ ແຂ່ງຂັນຢ່າງເປັນທຳ;
3. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໃຫ້ບໍລິການ ແລະ ຜູ້ຊົມໃຊ້ບໍລິການໂທລະຄົມມະນາຄົມ ທີ່ຖືກຕ້ອງຕາມກົດໝາຍ;
4. ສອດຄ່ອງກັບສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການດ້ານໂທລະຄົມມະນາຄົມຢູ່ໃນ ສປປ ລາວ. vps

## ໝວດທີ 2
## ການແຂ່ງຂັນດ້ານໂທລະຄົມມະນາຄົມ

**ມາດຕາ 7. ຮູບແບບການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການແຂ່ງຂັນດ້ານໂທລະຄົມມະນາຄົມປະກອບ ມີ ສາມ ຮູບການດັ່ງນີ້:

1. ການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ເປັນທຳ;
2. ການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ບໍ່ເປັນທຳ;
3. ການຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ບໍ່ເປັນທຳ.

**ມາດຕາ 8. ການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ເປັນທຳ**

ການແຂ່ງຂັນດ້ານໂທລະຄົມມະນາຄົມທີ່ເປັນທຳ ແມ່ນ ການແຂ່ງຂັນລະຫວ່າງຜູ້ໃຫ້ບໍລິການໂທລະຄົມມະນາຄົມທີ່ແຂ່ງຂັນໂດຍຖືກຕ້ອງສອດຄ່ອງຕາມຫຼັກການ ແລະ ບໍ່ໄດ້ນຳໃຊ້ພຶດຕິກຳໃດທີ່ມີລັກສະນະເອົາປຽບ ຫຼື ເອົາຊະນະຄູ່ແຂ່ງຂັນ ເພື່ອຜົນປະໂຫຍດຂອງທຸລະກິດຕົນ ແລະ/ຫຼື ທຳລາຍທຸລະກິດຄູ່ແຂ່ງ.

**ມາດຕາ 9. ການແຂ່ງຂັນທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ**

ການແຂ່ງຂັນທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ ແມ່ນ ການຈຳກັດຮູບແບບສົ່ງເສີມການຂາຍຂອງຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ໂດຍພຶດຕິກຳຕ່າງໆທີ່ເປັນອຸປະສັກຕໍ່ການແຂ່ງຂັນທີ່ເປັນທຳ. ຊຶ່ງເຮັດໃຫ້ເກີດມີການແກ່ງແຍ້ງສ່ວນແບ່ງຕະຫຼາດທີ່ບໍ່ເປັນທຳ ແລະ ຜູ້ໃຫ້ບໍລິການລາຍນ້ອຍ ຫຼື ລາຍໃໝ່ ບໍ່ສາມາດເຂົ້າຮ່ວມການແຂ່ງຂັນຢ່າງເປັນທຳ ໃນພື້ນທີ່ໃຫ້ບໍລິການດຽວກັນໄດ້.

**ມາດຕາ 10. ການຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ ແມ່ນ ການເຄື່ອນໄຫວດຳເນີນທຸລະກິດໂທລະຄົມມະນາຄົມ ຂອງໜຶ່ງ ຫຼື ສອງຜູ້ໃຫ້ບໍລິການຂຶ້ນໄປ. ເພື່ອຈຸດປະສົງຫຼຸດຜ່ອນ, ບິດເບືອນ, ຂັດຂວາງການແຂ່ງຂັນດ້ານໂທລະຄົມມະນາຄົມ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການອື່ນ, ຈຳກັດຄວາມກ້າວໜ້າທາງດ້ານເຕັກໂນໂລຊີ, ດ້ານວິຊາການ ແລະ ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**ມາດຕາ 11. ຮູບການ ການຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ ມີ ສາມ ປະເພດ ດັ່ງນີ້:

1. ການຕົກລົງຮ່ວມກັນເພື່ອຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ;
2. ການໃຊ້ອຳນາດຄອບຄອງຕະຫຼາດດ້ານໂທລະຄົມມະນາຄົມ;
3. ການຜູກຂາດຕະຫຼາດໂທລະຄົມມະນາຄົມ.

**ມາດຕາ 12. ການຕົກລົງຮ່ວມກັນເພື່ອຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ**

ການຕົກລົງຮ່ວມກັນເພື່ອຈຳກັດການແຂ່ງຂັນດ້ານໂທລະຄົມມະນາຄົມ ແມ່ນ ການໃຫ້ຄຳໝັ້ນສັນຍາຮ່ວມກັນ ແຕ່ສອງຜູ້ໃຫ້ບໍລິການຂຶ້ນໄປ ເພື່ອຫຼຸດຜ່ອນ, ບິດເບືອນ, ຂັດຂວາງການແຂ່ງຂັນດ້ານໂທລະຄົມມະນາຄົມ ຊຶ່ງປະກອບດ້ວຍ ການຕົກລົງຮ່ວມກັນ ເພື່ອຈຸດປະສົງໃດໜຶ່ງ ດັ່ງນີ້:

1. ການກຳນົດລາຄາສິນຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມ;
2. ການແບ່ງປັນຕະຫຼາດຈຳໜ່າຍ, ສະໜອງສິນຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມ; VPS

3. ການຈຳກັດເງື່ອນໄຂ, ຄວບຄຸມປະລິມານການສະໜອງຜະລິດ, ການເລືອກໃນການຊື້-ຂາຍສິນຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມ;
4. ການຈຳກັດການພັດທະນາເຕັກໂນໂລຊີ, ວິຊາການ ແລະ ການລົງທຶນດ້ານໂທລະຄົມມະນາຄົມ;
5. ການກຳນົດເງື່ອນໄຂ ຫຼື ບັງຄັບໃຫ້ຜູ້ບໍລິການອື່ນ ເຮັດສັນຍາຊື້-ຂາຍ ສິນຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມຂອງຕົນ ແລະ ເງື່ອນໄຂອື່ນທີ່ບໍ່ກ່ຽວກັບສັນຍາ;
6. ການບໍ່ອະນຸຍາດໃຫ້ຜູ້ບໍລິການອື່ນ ເຂົ້າເຖິງຕະຫຼາດຂອງຕົນ;
7. ການບີບບັງຄັບຜູ້ໃຫ້ບໍລິການທີ່ບໍ່ໄດ້ຕົກລົງຮ່ວມກັນ ອອກຈາກຕະຫຼາດ;
8. ການແຕ່ງຕັ້ງ ຫຼື ມອບໝາຍໃຫ້ບຸກຄົນໃດໜຶ່ງດຳເນີນທຸລະກິດແຕ່ພຽງຜູ້ດຽວໃນການຈຳໜ່າຍຜະລິດຕະພັນ ຫຼື ໃຫ້ການບໍລິການໃນພື້ນທີ່ໃດໜຶ່ງ;
9. ການກະທຳອື່ນ ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 13. ການໃຊ້ອຳນາດຄອບຄອງຕະຫຼາດດ້ານໂທລະຄົມມະນາຄົມ**

ການໃຊ້ອຳນາດຄອບຄອງຕະຫຼາດດ້ານໂທລະຄົມມະນາຄົມ ແມ່ນ ການເຄື່ອນໄຫວທຸລະກິດການບໍລິການດ້ານໂທລະຄົມມະນາຄົມ ໃຊ້ອຳນາດເພື່ອຄອບຄອງຕະຫຼາດທີ່ກ່ຽວຂ້ອງ ດ້ວຍວິທີການກຳນົດລາຄາ, ຈຳກັດປະລິມານ ຫຼື ຄຸນນະພາບຂອງສິນຄ້າຜູ້ອື່ນ ເພື່ອກີດຂວາງການເຂົ້າເຖິງຕະຫຼາດຂອງຄູ່ແຂ່ງ ຫຼື ພັກດັນຄູ່ແຂ່ງຂັນທີ່ມີຢູ່ແລ້ວອອກຈາກຕະຫຼາດ.

**ມາດຕາ 14. ການຜູກຂາດຕະຫຼາດດ້ານໂທລະຄົມມະນາຄົມ**

ການຜູກຂາດຕະຫຼາດດ້ານໂທລະຄົມມະນາຄົມ ແມ່ນ ມີຜູ້ຂາຍສິນຄ້າ ແລະ ມີການບໍລິການໂທລະຄົມມະນາຄົມຢູ່ໃນຕະຫຼາດໂທລະຄົມມະນາຄົມໜຶ່ງຊຶ່ງມີການຜູກຂາດ ຍ້ອນສາເຫດຈາກສະພາບແວດລ້ອມ ຫຼື ຜູກຂາດດ້ວຍວິທີການຈຳກັດຄູ່ແຂ່ງ.

## ໝວດທີ 3
## ການແຂ່ງຂັນທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ ແລະ ການຄຸ້ມຄອງ, ກວດກາ ແລະ ລາຍງານອົງການການແຂ່ງຂັນດ້ານໂທລະຄົມມະນາຄົມ

**ມາດຕາ 15. ພຶດຕິກຳການແຂ່ງຂັນທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ**

ການແຂ່ງຂັນທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ ມີ ຫ້າ ພຶດຕິກຳ ດັ່ງລຸ່ມນີ້:
1. ການໃຫ້ຄຳແນະນຳໃນທາງທີ່ຜິດດ້ານໂທລະຄົມມະນາຄົມ;
2. ການລະເມີດຄວາມລັບທາງທຸລະກິດດ້ານໂທລະຄົມມະນາຄົມ;
3. ການສ້າງອຸປະສັກກີດຂວາງຕໍ່ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ;
4. ການໂຄສະນາບິດເບືອນຄວາມຈິງດ້ານໂທລະຄົມມະນາຄົມ;
5. ການສົ່ງເສີມການຂາຍ ທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ.

**ມາດຕາ 16. ການໃຫ້ຄຳແນະນຳໃນທາງທີ່ຜິດດ້ານໂທລະຄົມມະນາຄົມ**

ການໃຫ້ຄຳແນະນຳໃນທາງທີ່ຜິດດ້ານໂທລະຄົມມະນາຄົມ ແມ່ນ ການແນະນຳຜູ້ໃຊ້ບໍລິການໃຫ້ສັບສົນ ແລະ ເຂົ້າໃຈຜິດກ່ຽວກັບ ເຄື່ອງໝາຍ, ແຫຼ່ງກຳເນີດ, ການຫຸ້ມຫໍ່, ສະຫຼາກ ແລະ ອົງປະກອບອື່ນ ຂອງສິນຄ້າ ແລະ ການບໍລິການໂທລະຄົມມະນາຄົມ. vpk

**ມາດຕາ 17. ການລະເມີດຄວາມລັບທາງທຸລະກິດດ້ານໂທລະຄົມມະນາຄົມ**

ການລະເມີດຄວາມລັບທາງທຸລະກິດດ້ານໂທລະຄົມມະນາຄົມ ແມ່ນ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ການເຂົ້າເຖິງ ແລະ ການເກັບກຳຂໍ້ມູນຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ການເປີດເຜີຍ ແລະ ການໃຊ້ຂໍ້ມູນຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;
3. ການລະເມີດສັນຍາຮັກສາຄວາມລັບ ຫຼື ການສວຍໃຊ້ຄວາມເຊື່ອຖື ຂອງຜູ້ທີ່ມີໜ້າທີ່ຮັກສາຄວາມລັບນັ້ນ ເພື່ອເຂົ້າເຖິງ ແລະ ເກັບກຳຂໍ້ມູນຂ່າວສານດັ່ງກ່າວ.

**ມາດຕາ 18. ການສ້າງອຸປະສັກກີດຂວາງຕໍ່ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ**

ການສ້າງອຸປະສັກກີດຂວາງຕໍ່ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ແມ່ນ ການສ້າງຄວາມຫຍຸ້ງຍາກບໍ່ສັບສົນໂດຍທາງກົງ ຫຼື ທາງອ້ອມໃຫ້ແກ່ການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ.

**ມາດຕາ 19. ການໂຄສະນາບິດເບືອນຄວາມຈິງດ້ານໂທລະຄົມມະນາຄົມ**

ການໂຄສະນາບິດເບືອນຄວາມຈິງດ້ານໂທລະຄົມມະນາຄົມ ແມ່ນ ການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບສິນຄ້າ ແລະ ການບໍລິການໂທລະຄົມມະນາຄົມ ທີ່ບໍ່ຖືກຕ້ອງຕາມຄວາມຈິງ ເປັນຕົ້ນ ປະເພດ, ຊະນິດ, ຄຸນລັກສະນະ, ປະລິມານ, ຄຸນນະພາບ, ກາໝາຍ, ສະຫຼາກ, ເຄື່ອງໝາຍການຄ້າ ແລະ ການບໍລິການໂທລະຄົມມະນາຄົມ ເພື່ອສ້າງຄວາມເຂົ້າໃຈຜິດ ຫຼື ຕົວະຍົວະຫຼອກລວງຜູ້ໃຊ້ບໍລິການ, ສງດສີ, ໝິ່ນປະມາດສິນຄ້າ ແລະ ການບໍລິການໂທລະຄົມມະນາຄົມ.

**ມາດຕາ 20. ການສົ່ງເສີມການຂາຍທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ**

ການສົ່ງເສີມການຂາຍທີ່ບໍ່ເປັນທຳດ້ານໂທລະຄົມມະນາຄົມ ແມ່ນ ການສົ່ງເສີມການຂາຍດ້ວຍການຕົວະຍົວະ, ຫຼອກລວງ, ສ້າງຄວາມສັບສົນ ແລະ ເຂົ້າໃຈຜິດໃຫ້ຜູ້ໃຊ້ບໍລິການ, ເລືອກປະຕິບັດລະຫວ່າງລູກຄ້າ, ແຈກລາງວັນ, ໃຫ້ທົດລອງໃຊ້ສິນຄ້າ ແລະ ການບໍລິການໂທລະຄົມມະນາຄົມແບບບໍ່ຄິດຄ່າ.

**ມາດຕາ 21. ການຄຸ້ມຄອງການແຂ່ງຂັນດ້ານໂທລະຄົມມະນາຄົມ.**

ການຄຸ້ມຄອງການແຂ່ງຂັນດ້ານໂທລະຄົມມະນາຄົມ ແມ່ນ ມອບໃຫ້ກົມໂທລະຄົມມະນາຄົມ ເປັນຜູ້ຄຸ້ມຄອງວຽກງານການແຂ່ງຂັນດ້ານໂທລະຄົມມະນາຄົມແບບລວມສູນ ໂດຍປະສານກັບອົງການປົກຄອງທ້ອງຖິ່ນ ຕາມພາລະບົດບາດຂອງຕົນ ໃນຂອບເຂດທົ່ວປະເທດ.

**ມາດຕາ 22. ການລາຍງານ**

ການລາຍງານ ແມ່ນ ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ຕ້ອງສັງລວມ, ສະຫຼຸບ ແລະ ລາຍງານຂໍ້ມູນສະຖິຕິ, ບໍລິມາດ ແລະ ມູນຄ່າຂອງການໃຫ້ບໍລິການ ເປັນປະຈຳເດືອນ, ງວດ, ປີ ໃຫ້ກົມໂທລະຄົມມະນາຄົມ ຢ່າງເປັນປົກກະຕິ ແລະ ທັນເວລາ.

**ມາດຕາ 23. ການກວດກາ**

ການກວດກາ ແມ່ນ ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ຄວາມຮັບຜິດຊອບ ແລະ ການປະພຶດ ໃນການແຂ່ງຂັນດ້ານໂທລະຄົມມະນາຄົມຂອງຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ. ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍ ຂອງ ສປປ ລາວ. ຊຶ່ງມີຮູບແບບໃນການກວດກາດັ່ງລຸ່ມນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດວັນ ແລະ ເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຈະຖືກກວດຮູ້ກ່ອນ ຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດຊາບ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 24. ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ໃຫ້ການບໍລິການຫາກໄດ້ດຳເນີນງານຢ່າງມີຄຸນນະພາບຖືກຕ້ອງ ແລະ ສອດຄ່ອງ ຕາມຂໍ້ກຳນົດສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 25. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ຖືກປັບໃໝ ຫຼື ຖືກລົງໂທດທາງແພ່ງ ຫຼື ທາງອາຍາ ແມ່ນຂຶ້ນກັບແຕ່ລະກໍລະນີ ເບົາ ຫຼື ໜັກ. ລວມທັງຕ້ອງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນໃຫ້ແກ່ຄູ່ກໍລະນີ.

### ມາດຕາ 26. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການດ້ານໂທລະຄົມມະນາຄົມ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີໜັກ ຫຼື ເບົາ, ຊຶ່ງ ກົມໂທລະຄົມມະນາຄົມ ກະຊວງ ປທສ ຈະເປັນຜູ້ກຳນົດໃນການປັບໃໝດັ່ງກ່າວ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 27. ການຈັດຕັ້ງປະຕິບັດ

ມອບໃຫ້ກົມໂທລະຄົມມະນາຄົມ ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

### ມາດຕາ 28. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີ ຜົນສັກສິດ ສິບຫ້າ ວັນລັດຖະການ ຫຼັງຈາກມື້ລົງລາຍເຊັນ ເປັນຕົ້ນໄປ. ᵛᵏ

**ລັດຖະມົນຕີວ່າການ**

ຫຼຽມ ພົມມະຈັນ